

## ການແຈ້ງສິດ

# ສິດຂອງ ຜູ້ຖືກຄ້າມະນຸດ

# ສິດ

## ຕາມກົດໝາຍກ່ຽວກັບຜູ້ຖືກຄ້າມະນຸດ

**ຖ້າເຂົາເຈົ້າ ຕ້ອງການ ທີ່ຈະໄດ້ຮັບການປົກປ້ອງ**



| ① | ② | ③ | ④ | ⑤ | ⑥ |
|---|---|---|---|---|---|
| **ຮັບການປົກປ້ອງຈາກອົງການຕ່າງໆ** | **ລາຍຮັບຈາກວຽກໃນໄລຍະການປົກປ້ອງ** | **ກອງທຶນຕ້ານການຄ້າມະນຸດ** | **ຄ້າງຄ່າລ້າງຈາກນາຍລ້າງ** | **ຄ່າຊົດເຊີຍເປັນພະຍານໃນຄະດີອາຍາ** | **ການທົດແທນຈາກຜູ້ກະທຳຜິດ** |
| ສູນຈາກ ລັດຖະບານ ຫຼື ອົງການທີ່ບໍ່ແມ່ນລັດຖະບານ | ໄດ້ຮັບຄ່າແຮງງານຕໍ່າສຸດ ສໍາລັບຜູ້ທີ່ຕ້ອງການເຮັດວຽກຢູ່ນອກສູນ | ຄ່າລ້ຽງຊີບ, ຄ່າດູແລສຸຂະພາບ, ຄ່າຊົດເຊີຍ, ຄ່າໃຊ້ຈ່າຍໃນການສົ່ງກັບ, ກອງທຶນໃນການລ້ຽງຊີບ , ອື່ນໆເປັນຕົ້ນ. | ຂຶ້ນຢູ່ກັບການເຈລະຈາກັບນາຍລ້າງເຊັ່ນ: ຄ່າແຮງງານ, ຄ່າລ່ວງເວລາ ແລະ ອື່ນໆ. | ກໍລະນີທີ່ມີການກະທຳຜິດທາງເພດ | ສານມີອຳນາດໃນການສັ່ງຜູ້ກະທຳຜິດຈ່າຍຄ່າທົດແທນໃຫ້ແກ່ຜູ້ເຄາະຮ້າຍ |

**ຖ້າຫາກເຂົາເຈົ້າ ບໍ່ຕ້ອງການໄດ້ຮັບການປົກປ້ອງ***

| ③ | ④ | ⑤ | ⑥ |
|---|---|---|---|
| **ກອງທຶນຕ້ານການຄ້າມະນຸດ** | **ຄ້າງຄ່າລ້າງຈາກນາຍລ້າງ** | **ຄ່າຊົດເຊີຍເປັນພະຍານໃນຄະດີອາຍາ** | **ການທົດແທນຈາກຜູ້ກະທຳຜິດ** |

** ໝາຍເຫດ: ຜູ້ຖືກຄ້າມະນຸດອາດຈະຖືກເຊີນມາໃຫ້ຂໍ້ມູນຕາມພາຍຫຼັງ. ຄ່າໃຊ້ຈ່າຍໃນການເດີນທາງຈະຕ້ອງແມ່ນອົງການເຊີນເປັນຜູ້ຮັບຜິດຊອບ ໂດຍພິຈາລະນາເຖິງຄວາມປອດໄພຂອງຜູ້ຖືກຄ້າມະນຸດ ແລະ ຄອບຄົວຂອງເຂົາເຈົ້າ.*

ໄດ້ຮັບການ
ປົກປ້ອງຈາກ
ອົງການຕ່າງໆ

## ສູນລັດຖະບານ

ສູນລັດຖະບານ
ແລະ
ບໍ່ແມ່ນອົງການ
ລັດຖະບານ

**ພະແນກຕ້ານ
ການຄ້າມະນຸດ**
02202 9074 – 6

**ສູນປະຊາບໍດີ (ສູນ
ຮ້ອງທຸກ)**
1300 ( 24 ຊົ່ວໂມງ)






ບໍລິການທີ່ພັກເຊົາ









ແນະນຳ | ອາຫານ 3 ຄາບຕໍ່ມື້ | ໃຫ້ຄຳປຶກສາ







ຝຶກວິຊາຊີບ | ກຽມເປັນພະຍານ | ການສຶກສາ







ການຈ້າງງານ | ກິດຈະກຳຍາມຫວ່າງ | ການກັບຄືນສູ່ສັງຄົມ

## ສະເລ່ຍໄລຍະເວລາຢູ່ສູນ

- ຢັ້ງຢືນເອກະສານ
- ແຈ້ງສິດ

**0 – 3 ເດືອນ**

- ຂໍ້ມູນ
- ການຕ້ອນຮັບຄັ້ງທໍາອິດ
- ແນະນໍາ/ປຶກສາ
- ບໍລິການສຸຂະພາບ/ ກວດຮ່າງກາຍ
- ຟື້ນຟູຮ່າງກາຍ ແລະ ຈິດໃຈ
- ຊ່ວຍທາງດ້ານກົດໝາຍ
- ຮຽກຮ້ອງຄ່າຊົດເຊີຍ
- ຝຶກອົບຮົມວິຊາຊີບ
- ຕໍາແໜ່ງງານ

**3 – 6 ເດືອນ**

- ກຽມເປັນພະຍານໃນ ຂະບວນການຍຸຕິທໍາ
- ຝຶກອົບຮົມທັກສະຊີວິດ ກ່ອນກັບຄືນ
- ກັບຄືນ ແລະ ຄືນສູ່ ຄອບຄົວ / ສະຖານທີ່ ຕົ້ນທາງ

## ລາຍຮັບຈາກວຽກໃນໄລຍະການປົກປ້ອງ

ໄດ້ຮັບຄ່າແຮງງານຕໍ່າສຸດ ສໍາລັບຜູ້ທີ່ ຕ້ອງການ ເຮັດວຽກ ຢູ່ນອກສູນ

*ພາກທີ 37, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພ. ສ. 2551 (2008)*

## ໄດ້ຮັບການປົກປ້ອງໃນສູນ

ບໍ່ເກີນ 1 ອາທິດ

**ໃນກໍລະນີທີ່ບໍ່ແມ່ນຄົນໄທ, ຍື່ນເພື່ອຂໍຢູ່ໃນປະເທດຊົ່ວຄາວ**

ບໍ່ເກີນ 1 ອາທິດ

**ປະສານງານກັບກົມຈັດຫາງານ ເພື່ອຊອກວຽກທີ່ເໝາະສົມ**

ໃນ 15 ວັນ

**ເຮັດຂໍ້ຕົກລົງກັບຜູ້ຈ້າງງານ ກ່ຽວກັບຊົ່ວໂມງເຮັດວຽກ ແລະ ຄ່າແຮງງານ**

ໝາຍເຫດ:
- ຜູ້ຖືກຄ້າມະນຸດອາດຈະສາມາດເຮັດວຽກໃນສູນ.
- ຜູ້ຖືກຄ້າມະນຸດຖືກອະນຸຍາດໃຫ້ເຮັດວຽກນອກສູນ, ພຽງແຕ່ພາຍໃນພື້ນທີ່ແຂວງທີ່ສູນຕັ້ງຢູ່ເທົ່ານັ້ນ

# ກອງທຶນຕ້ານການຄ້າມະນຸດ



- ຄ່າຄອງຊີບ — 3,000 ບາດຕໍ່ຄືນ ຈຳກັດ 3 ຄັ້ງຕໍ່ປີ
- ຄ່າດູແລສຸຂະພາບ — 30,000 ບາດຕໍ່ຄືນ ຈຳກັດ 3 ຄັ້ງຕໍ່ປີ
- ຄ່າໃຊ້ຈ່າຍໃນການຟື້ນຟູສະມັດຕະພາບ — ຈຳກັດ ຮອດ 20,000 ບາດ
- ຄ່າຊົດເຊີຍເນື່ອງຈາກບໍ່ສາມາດເຮັດວຽກໄດ້ — 300 ບາດຕໍ່ມື້ ຈຳກັດຮອດ 1 ປີ
- ເຄື່ອງອຸປະໂພກບໍລິໂພກ — 3,000 ບາດຕໍ່ຄືນ ຈຳກັດ 3 ຄັ້ງຕໍ່ປີ
- ທີ່ພັກອາໃສ ບໍ່ມີໄດ້ຈ່າຍ
- ຄ່າການສຶກສາ/ ຝຶກອົບຮົມ
- ຮຽກຮ້ອງຄ່າຂະບວນການທາງກົດໝາຍ/ຄ່າສິນໃໝທົດແທນ
- ຄ່າກັບຄືນຫາສະຖານທີ່ຕົ້ນທາງ(ເຊັ່ນ ຄ່າໂດຍສານ, ຄ່າລົດໄຟ, ອື່ນໆ.)
- ຄ່າກັບຄືນມາປະເທດໄທ (ປີ້ຍົນ)

ຂຶ້ນຢູ່ກັບການອະນຸມັດຂອງຄະນະກຳມະການກອງທຶນຕ້ານການຄ້າມະນຸດ, ຕາມແຕ່ລະກໍລະນີ.

**ພະແນກຕ້ານການຄ້າມະນຸດ**
0 2202 9024-5
0 2202 9031-2

## ຄ້າງຄ່າລ້າງຈາກນາຍລ້າງ

ຈໍານວນຄ່າແຮງງານທີ່ຍັງບໍ່ທັນໄດ້ຊໍາລະທີ່ຜູ້ຖືກຄ້າມະນຸດໄດ້ຮັບຈາກນາຍລ້າງ



ອີງຕາມການເຈລະຈາກັບນາຍຈ້າງ

- ຄ່າແຮງງານ
- ຄ່າລ່ວງເວລາ
- ຄ່າມື້ພັກ
- ຄ່າລ່ວງເວລາມື້ພັກ

## ຄ່າຊົດເຊີຍເປັນພະຍານໃນຄະດີອາຍາ

ບຸກຄົນທີ່ໄດ້ຮັບບາດເຈັບທາງຄະດີອາຍາທີ່ພົວພັນກັບຄວາມຜິດທາງເພດ

(ຕາມກົດໝາຍວ່າດ້ວຍການປົກປ້ອງ ແລະ ປາບປາມໂສເພນີ)



ກົມຄຸ້ມຄອງສິດ ແລະ ເສລີພາບຈ່າຍເງິນໃຫ້ບໍ່ເກີນ 30,000 ບາດ

## ການທົດແທນຈາກຜູ້ກະທໍາຜິດ

ສານມີອໍານາດໃນການສັ່ງຜູ້ກະທໍາຜິດໃຫ້ຈ່າຍຄ່າທົດແທນແກ່ຜູ້ເຄາະຮ້າຍ



ພາກທີ 35, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພ.ສ. 2551 (2008)

## ຄ່າຊົດເຊີຍ*

### ❶ຄວາມເສຍຫາຍຕໍ່ຊັບສິນ

- ຄ່າໃຊ້ຈ່າຍໃນການເດີນທາງ
- ຄະນະກໍາມະທິການ
- ຄ່າຊັບສິນທີ່ຜູ້ກະທໍາຄວາມຜິດຍຶດ/ ທໍາລາຍ.
- ຄ່າຮັກສາສຸຂະພາບ(ຈ່າຍຕົວຈິງ)
- ການສູນເສຍລາຍໄດ້
- ເສຍໂອກາດໃນການເຮັດວຽກ

### ❷ຄວາມເສຍຫາຍໃນຮູບແບບອື່ນໆ

- ການລະເມີດກຽດສັກສີຄວາມເປັນມະນຸດ
- ຄວາມທໍລະມານທາງດ້ານຮ່າງກາຍ ແລະ ຄວາມຮູ້ສຶກ
- ເສຍຊື່ສຽງ
- ຄວາມເສຍຫາຍຕໍ່ຄວາມສາມາດທາງດ້ານຮ່າງກາຍ ແລະ ຈິດໃຈ
- ເສຍຄວາມສຸກ ແລະ ຄວາມເປັນຢູ່ທີ່ດີ
- ເສຍອິດສິຫຼະພາບ ແລະ ເສລີພາບ

** ຄ່າຊົດເຊີຍທີ່ແຕ່ລະຄົນຈະໄດ້ຮັບແມ່ນຂຶ້ນຢູ່ກັບຄວາມຈິງໃນແຕ່ລະກໍລະນີ, ຄວາມຮຸນແຮງ, ໄລຍະເວລາຜົນກະທົບຕໍ່ການດໍາເນີນການ.*

** ຈໍານວນເງິນສູງສຸດແມ່ນ 900,000 ບາດ, ໄດ້ຮັບນັບຈາກມື້ທີ່ມີການລົງໂທດ.*

## ແບບຟອມເພື່ອແຈ້ງສິດຂອງຜູ້ຖືກຄ້າມະນຸດ

ທີ່..........

ວັນທີ.......... ເດືອນ.......... ປີ..........

ຂ້າພະເຈົ້າ, ທ້າວ/ນາງ.......... ອາຍຸ .......... ສັນຊາດ .......... ບັດປະຈໍາຕົວເລກທີ /ເອກະສານປະຈໍາຕົວ..........

ການກັບຄືນນີ້ແມ່ນ ☐ ກັບມາໂດຍສະໝັກໃຈ ☐ ກັບມາແບບບໍ່ສະໝັກໃຈ

☐ ຂ້າພະເຈົ້າໄດ້ຮັບແຈ້ງຈາກກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດຕາມກົດໝາຍວ່າດ້ວຍການຕ້ານການຄ້າມະນຸດປີ 2008, ຂ້າພະເຈົ້າມີສິດດັ່ງນີ້ :

1. ຂ້າພະເຈົ້າຕ້ອງການໄດ້ຮັບການປົກປ້ອງ, ຂ້າພະເຈົ້າມີສິດທີ່ຈະໄດ້ຮັບການຊ່ວຍເຫຼືອຢ່າງເໝາະສົມສໍາລັບອາຫານ, ທີ່ພັກ, ການດູແລສຸຂະພາບ, ການຟື້ນຟູຮ່າງກາຍ ແລະ ຈິດໃຈ, ການສຶກສາ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການກັບຄືນບ້ານຢ່າງປອດໄພ ແລະ ສົມກຽດ.
2. ສິດໃນການພັກຢູ່ທີ່ປະເທດໄທຊົ່ວຄາວ, ໂດຍມີສິດໃນການເຮັດວຽກຊົ່ວຄາວຕາມກົດໝາຍທີ່ກໍານົດ.
3. ສິດໃນຄວາມປອດໄພ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄອບຄົວຂອງເຂົາເຈົ້າ ກ່ອນ, ລະຫວ່າງ ແລະ ຫຼັງ ການຕັດສິນຜູ້ຄ້າມະນຸດ. ຜູ້ຖືກຄ້າມະນຸດ, ໃນຖານະພະຍານໃນຂະບວນການຍຸດຕິທໍາກັບຜູ້ຄ້າມະນຸດຄວນໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍວ່າດ້ວຍການປົກປ້ອງພະຍານ.
4. ສິດໃນການຮຽກຮ້ອງຄ່າຊົດເຊີຍ, ການຊົດໃຊ້ຄ່າເສຍຫາຍໃນລະຫວ່າງການດໍາເນີນຄະດີຕໍ່ຜູ້ຄ້າມະນຸດ. ການຊ່ວຍເຫຼືອນີ້ຈະຖືກຈັດຫາໃຫ້ໂດຍບໍ່ມີຄ່າໃຊ້ຈ່າຍເຊິ່ງເປັນສ່ວນໜຶ່ງຂອງການບໍລິການຜູ້ຖືກຄ້າມະນຸດ.
5. ສິດຂອງຜູ້ຖືກຄ້າມະນຸດບໍ່ຖືກດໍາເນີນຄະດີໃນອາຊະຍາກໍາດັ່ງຕໍ່ໄປນີ້: ການເຂົ້າປະເທດແບບຜິດກົດໝາຍຕາມກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ; ການລາຍງານທີ່ບໍ່ມີຄວາມຈິງ ແລະ ການກ່າວຫາເຈົ້າໜ້າທີ່ຂອງລັດ, ຖືກຫຼອກລວງໃຫ້ໃຊ້ເອກະສານປະຈໍາຕົວ ຫຼື ເອກະສານການເດີນທາງດັ່ງທີ່ໄດ້ລະບຸໄວ້ໃນກົດໝາຍອາຍາ; ຄວາມຜິດຕາມກົດໝາຍວ່າດ້ວຍການປ້ອງກັນ ແລະ ການປາບປາມການຄ້າໂສເພນີ; ແລະ ການເຮັດວຽກໂດຍບໍ່ມີໃບອະນຸຍາດເຮັດວຽກຕາມກົດໝາຍວ່າດ້ວຍການເຮັດວຽກຂອງຄົນຕ່າງດ້າວ.ເຖິງ ຢ່າງໃດກໍ່ຕາມ, ເຈົ້າໜ້າທີ່ໄອຍະການສາມາດສັ່ງຟ້ອງຜູ້ຖືກຄ້າມະນຸດຕາມຂໍ້ຫາດັ່ງກ່າວໄດ້ ເມື່ອໄດ້ຮັບການອະນຸຍາດເປັນລາຍລັກອັກສອນຈາກລັດຖະມົນຕີກະຊວງຍຸດຕິທໍາ.
6. ສິດໃນການຮັບເງິນຊ່ວຍເຫຼືອຈາກກອງທຶນຕ້ານການຄ້າມະນຸດ.

ຂ້າພະເຈົ້າຮັບຊາບ ແລະ ເຂົ້າໃຈສິດຂອງຂ້າພະເຈົ້າທີ່ເປັນຜູ້ຖືກຄ້າມະນຸດ.

☐ ຂ້າພະເຈົ້າບໍ່ຂໍຮັບການປົກປ້ອງຍ້ອນວ່າ ..........
ທ່ານສາມາດຕິດຕໍ່ຂ້າພະເຈົ້າໄດ້ທີ່ ..........

☐ ຂ້າພະເຈົ້າຕ້ອງການທີ່ຈະໄດ້ຮັບການຊ່ວຍເຫຼືອໂດຍສະໝັກໃຈ ..........
ແລະ ຂ້າພະເຈົ້າຍິນດີທີ່ຈະປະຕິບັດຕາມລະບຽບທັງໝົດຂອງສູນປົກປ້ອງ.

| | |
|---|---|
| .......... | .......... |
| ຜູ້ຖືກຊ່ວຍເຫຼືອ | ເຈົ້າໜ້າທີ່ |
| .......... | .......... |
| ພະຍານ | ພະຍານ/ຜູ້ແປພາສາ |

ກະຊວງພັດທະນາສັງຄົມ ແລະ ຄວາມຫມັ້ນຄົງຂອງມະນຸດ